ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ
ຫ້ອງການກອງບັນຊາການ

ເລກທີ 564 /ຫກ
ວັນທີ 28 ກັນຍາ 2021

# ແຈ້ງການເພີ່ມເຕີມ

**ເຖິງ:** ຄະນະບັນຊາ ແລະພະນັກງານປະຈຳຈຸດກວດກາທາງເຂົ້າ-ອອກ ນະຄອນຫຼວງວຽງຈັນແລະ ຈຸດ ກວດກາຕາມເສັ້ນທາງຕ່າງ ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ຄົນ ແລະ ພາຫານະຄວນໄດ້ອານຸຍາດຜ່ານບັນດາຈຸດກວດກາ ເຂົ້າ-ອອກ ນະຄອນຫຼວງວຽງຈັນ ແລະ ໃນຕົວເມືອງ

- ອີງຕາມ ຄຳສັ່ງເລກທີ 016/ຈນວ, ລົງວັນທີ 19 ກັນຍາ 2021.

ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ຂຶ້ນບັນຊີໃຫ້ບັນດາຈຸດກວດກາຕາມເສັ້ນທາງຢ່າງເຂັ້ມງວດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ ຢູ່ນະຄອນຫຼວງວຽງຈັນ, ແຕ່ກໍ່ຍົກເວັ້ນໃຫ້ບຸກຄົນ ແລະ ນິຕິບຸກຄົນດັ່ງນີ້:

**1. ການອານຸຍາດໃຫ້ຄົນ ແລະ ພາຫານະ ເດີນທາງປະຕູເຂົ້າ-ອອກນະຄອນຫຼວງວຽງຈັນ ຕາມຈຸດກວດກາທາງບົກ.**

1). ລົດຂົນສົ່ງສິນຄ້າ ແລະ ລົດຂົນສົ່ງໂຄງການຕ່າງໆຂອງລັດຖະບານ .

2). ບຸກຄົນທີ່ຖືກແຕ່ງຕັ້ງຈາກທາງການ ຫຼື ອົງການຈັດຕັ້ງລັດໄປວຽກທາງລັດຖະການ .

3). ຜູ້ທີ່ເຈັບເປັນ ຫຼື ລົດແພດ.

4). ບຸກຄົນທີ່ໄປທຳການຜະລິດກະສິກຳ ປູກຝັງ-ລ້ຽງສັດ ທີ່ໃກ້ຄຽງກັບບັນດາແຂວງທີ່ບໍ່ເປັນບ້ານແດງ

**2. ການອານຸຍາດຄົນ ແລະ ພາຫານະ ເດີນທາງພາຍໃນນະຄອນຫຼວງ.**

1). ພະນັກງານ ແລະ ພາຫານະ(ຕາມການແບ່ງປັນຂອງອົງການຈັດຕັ້ງທີ່ກ່ຽວຂ້ອງທີ່ມີການຢັ້ງຢືນ), ທະຫານ, ຕຳຫຼວດ ທີ່ໄປປະຕິບັດໜ້າທີ່ຢູ່ກົມກອງ ຫຼື ໄປເຮັດໜ້າທີ່ປ້ອງກັນໂຄວິດ.

2). ພະນັກງານ, ພາຫານະ(ລົດ )ຂອງບໍລິສັດທີ່ພົວພັນກັບການແພດ ແລະ ປິ່ນປົວຢາປົວພະຍາດ, ອາສາສະມັກໜ່ວຍກູ້ໄພ, ອາສາສະມັກເພື່ອປ້ອງກັນພະຍາດໂຄວິດ 19 ຢູ່ບັນສູນກັກກັນ-ສູນປິ່ນປົວ ທີ່ມີເອກະສານຢັ້ງຢືນ.

3). ພະນັກງານ ແລະ ພາຫານະ(ລົດ) ທີ່ໄປປະຕິບັດໜ້າທີ່ບໍລິການໄຟຟ້າ, ນ້ຳປະປາ, ການສື່ສານ-ໂທລະຄົມມານາຄົມ, ອະນາໄມເທດສະບານທີ່ມີເອກະສານຢັ້ງຢືນ (ນັບທັງອາສາສະມັກຖ້າມີ).

4). ພະນັກງານສະເພາະກິດເພື່ອປ້ອງກັນ ,ຄວບຄຸມ ແລະ ສະກັດກັ້ນພະຍາດໂຄວິດ19 ຂັ້ນຕ່າງໆ ມີເອກະສານຢັ້ງຢືນ.

5). ບຸກຄົນທີ່ໄປທຳການຜະລິດກະສິກຳປູກຝັງ-ລ້ຽງສັດ ມີການຢັ້ງຢືນຈາກບ້ານ(ບໍ່ແມ່ນບ້ານແດງ) ແລະ ລະບຸພື້ນທີ່ການຜະລິດບໍ່ແມ່ນເຂດແດງ.

6). ພະນັກງານ, ພາຫານະ(ລົດ) ຂົນສົ່ງສິນຄ້າ ຂອງບໍລິສັດຂະໜາດກາງ ແລະ ຂະໜາດໃຫ່ຍ ທີ່ມີເອກະສານອານຸຍາດດຳເນີນທຸລະກິດ.

7). ພະນັກງານຮັບໃຊ້ສະຖານທູດ, ອົງການສະຫະປະຊາຊາດທີ່ມີເອກະສານຢັ້ງຢືນ.

8). ສະເພາະຜູ້ເຈັບເປັນຕ້ອງໄປໂຮງໝໍ ( ກໍລະນີພິເສດ ).

**ຫົວໜ້າຫ້ອງການກອງບັນຊາການ ປກສ ນະຄອນຫຼວງວຽງຈັນ**

ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ກະຊວງປ້ອງກັນຄວາມສະຫງົບ ຫ້ອງການ

**ສົມພຽງ ສຸກປະເສີດ**
**Sompheang SOUKPHASEUTH**